**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ                                        ເລກທີ 17 /ສພຂ.ຊຍ

ໄຊຍະບູລີ, ວັນທີ ...17.ເມສາ 2026.

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວ
## ວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V

- ອີງຕາມ ມາດຕາ 46 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານ ຂອງ ຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳຄິດຄຳເຫັນ ຂອງບັນດາສະມາຊິກສະພາປະຊາຊົນແຂວງ ຕໍ່ກັບແຜນການເຄື່ອນໄຫວວຽກງານ 5 ປີ (2026 -2030) ຂອງສະພາປະຊາຊົນແຂວງ ຊຸດທີ V ໃນກອງປະຊຸມຄັ້ງປະຖົມມະລຶກ ຄັ້ງວັນທີ 10 ເມສາ 2026.

ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ດັ່ງນີ້:

1. ດ້ານນິຕິກຳ

1) ເອົາໃຈໃສ່ຊຸກຍູ້ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ໄດ້ 21 ສະບັບ ຄື: ສ້າງໃໝ່ 8 ສະບັບ, ປັບປຸງ 13 ສະບັບ ໃນນີ້: ປະເມີນຜົນການຈັດຕັ້ງປະຕິບັດໄປແລ້ວ 6 ສະບັບ, ຍັງ 7 ສະບັບ;

2) ເພີ່ມທະວີຄວາມຮັບຜິດຊອບຕໍ່ ພະແນກການ-ອົງການ ທີ່ສະເໜີສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ແນໃສ່ຮັບປະກັນໃນການພິຈາລະນາ ແລະ ຮັບຮອງໃຫ້ມີຄຸນນະພາບ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ຄວາມມຸ້ງມາດປາດຖະໜາຂອງປະຊາຊົນແຂວງບັນດາເຜົ່າພາຍໃນແຂວງ. ພ້ອມທັງ ຊຸກຍູ້ການຈັດຕັ້ງການປະເມີນບັນດານິຕິກຳໃຕ້ກົດໝາຍ ທີ່ໄດ້ຮັບຮອງໄປແລ້ວນັ້ນ ໃຫ້ໄດ້ຮັບການປັບປຸງສອດຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ;

3) ເຂົ້າຮ່ວມທາມທາບ, ປະເມີນ ແລະ ປະກອບຄຳຄິດເຫັນໃສ່ຮ່າງກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງຈັດຂຶ້ນ;

4) ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຕາມສິດ ແລະ ພາລະບົດບາດຂອງຕົນ ໃຫ້ກວ້າງຂວາງ ດ້ວຍຫຼາຍຮູບແບບຫຼາຍຊ່ອງທາງ;

5) ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງໃນການຜັນຂະຫຍາຍບັນດານິຕິກຳທີ່ໄດ້ຮັບຮອງໃຫ້ກວ້າງຂວາງ ແລະ ໄດ້ຮັບການຈັດຕັ້ງປະຕິບັດ.

2. ດ້ານການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ

1) ເອົາໃຈໃສ່ຄົ້ນຄວ້າ ຕົກລົງບັນຫາສຳຄັນຂອງທ້ອງຖິ່ນ ໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຮັບປະກັນຜົນປະໂຫຍດລວມຂອງທ້ອງຖິ່ນ, ຮັບປະກັນໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ;



สแกนด้วย CamScanner

2) ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນໃນແຕ່ລະໄລຍະ ຕ້ອງຮັບປະກັນໃຫ້ມີຄຸນນະພາບສອດແສງເຖິງການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ຄັ້ງທີ VIII ຂອງອົງຄະນະພັກແຂວງ ເປັນຕົ້ນແມ່ນ: ການພິຈາລະນາ, ຮັບຮອງການຊັບຊ້ອນກົງຈັກການຈັດຕັ້ງບຸກຄະລາກອນຂອງອົງການປົກຄອງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ໂຄງການລົງທຶນຂອງລັດ ແລະ ອື່ນໆ;

3) ໃນການຕົກລົງບັນຫາສຳຄັນຂອງແຂວງ ຕ້ອງໄດ້ເອົາໃຈໃສ່ສະໜອງຂໍ້ມູນໃຫ້ມີຄວາມຖືກຕ້ອງ ຊັດເຈນ ແລະ ຄົບຖ້ວນສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອປຶກສາຫາລື ແລະ ເອກະພາບກ່ຽວກັບເນື້ອໃນແຕ່ລະບັນຫາ ໃນການຄົ້ນຄວ້າ, ວິເຄາະ-ວິໄຈຂໍ້ມູນໃຫ້ລະອຽດເລິກເຊິ່ງ ແລະ ມີຄຸນນະພາບ ກ່ອນຈະນຳເຂົ້າກອງປະຊຸມສະພາ;

4) ຈັດຕັ້ງການປະເມີນຄວາມໄວ້ວາງໃຈ ຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງ ຮັບຮອງເອົາການສະເໜີແຕ່ງຕັ້ງ.

**3. ດ້ານການຕິດຕາມກວດກາ**

1) ຍົກສູງຄຸນນະພາບການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ການປະຕິບັດວາລະແຫ່ງຊາດ, ການປະຕິບັດບັນດາໂຄງການລົງທຶນຕ່າງໆ ລວມທັງບັນຫາທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມພາຍໃນແຂວງ;

2) ຕິດຕາມກວດກາ, ຊຸກຍູ້ ການເຄື່ອນໄຫວຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງການສະເໜີແຕ່ງຕັ້ງ, ການປະຕິບັດໜ້າທີ່ຂອງອົງການກວດສອບ-ກວດກາ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ;

3) ຕິດຕາມກວດກາ ຜ່ານກົນໄກການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີ, ສາຍດ່ວນ ໃຫ້ຖືກຕ້ອງຕາມກົດໝາຍ, ນິຕິກຳທີ່ກ່ຽວຂ້ອງ ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ມີຄວາມຍຸຕິທຳ ໃຫ້ບັນລຸ 85% ຂຶ້ນໄປ;

4) ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ-ເມືອງ, ການຈັດເກັບລາຍຮັບຢູ່ດ່ານສາກົນ, ການຂຸດຄົ້ນແຮ່ທາດ, ການເຊົ່າສຳປະທານ, ການໂຍກຍ້າຍຈັດສັນ-ການຊົດເຊີຍປະຊາຊົນທີ່ຖືກຜົນກະທົບໂຄງການ, ການສ້າງຕັ້ງ 45 ຕາແສງ, ບັນຫາທາງສຽງຂອງສັງຄົມ ແລະ ອື່ນໆ.

**4. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ**

1) ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ແລະ ສ້າງຕັ້ງຫ້ອງການຂອງ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ທີ່ເປັນເສນາທິການ ໃຫ້ເປັນລະບົບ, ເຂັ້ມແຂງ, ໜັກແໜ້ນ ແລະ ບັນຈຸຊັບຊ້ອນພະນັກງານເຂົ້າແຕ່ລະຕຳແໜ່ງງານໃຫ້ເໝາະສົມ ເພື່ອຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຫ້ອງວ່າການສະພາ ແລະ ຄະນະກຳມະການ ໃຫ້ມີຄຸນນະພາບດີຂຶ້ນ;

2) ເອົາໃຈໃສ່ ບຳລຸງສ້າງ ແລະ ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານເສນາທິການ ດ້ວຍການຍາດແຍ່ງທຶນຮອນ ຈາກພາກລັດ-ອົງການຈັດຕັ້ງສາກົນ ເພື່ອຍົກລະດັບວິຊາສະເພາະ, ທິດສະດີການເມືອງ-ການປົກຄອງ, ເຂົ້າຮ່ວມຝຶກອົບຮົມນຳສະພາແຫ່ງຊາດ, ເປັນເຈົ້າການຝຶກອົບຮົມຢູ່ຂັ້ນທ້ອງຖິ່ນຕົນ;

3) ຄົ້ນຄວ້າກຳນົດນະໂຍບາຍ ເພື່ອຮັບປະກັນແກ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ.

4) ຜັນຂະຫຍາຍກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ ເພື່ອເປັນເຄື່ອງມືໃນການເຄື່ອນໄຫວວຽກງານໃຫ້ມີຄຸນນະພາບ ໂດຍປະສານສົມທົບກັບ ຄະນະກຳມະການປົກຄອງແຂວງ-ເມືອງ ເພື່ອສ້າງ ແລະ ປັບປຸງນິຕິກຳ ທີ່ເປັນການພົວພັນປະສານງານ, ນິຕິກຳກ່ຽວກັບການພິຈາລະນາ ແລະ ຮັບຮອງບັນຫາສຳຄັນຂອງແຂວງ ຢູ່ໃນກອງປະຊຸມສະພາປະຊາຊົນແຂວງ.



สแกนด้วย CamScanner

5. ດ້ານການເຄື່ອນໄຫວວຽກງານການຕ່າງປະເທດ

1) ຄົ້ນຄວ້າ ແລະ ເຊື່ອມຊຶມ ກຳແໜ້ນຢ່າງເລິກເຊິ່ງ ຕາມແນວທາງນະໂຍບາຍການຕ່າງປະເທດຂອງພັກ-ລັດ; ເອົາໃຈໃສ່ປະຕິບັດການເຄື່ອນໄຫວວຽກງານການຕ່າງປະເທດຮ່ວມ ກັບ ສະພາແຫ່ງຊາດ ແລະ ຄະນະກຳມະການປົກຄອງແຂວງ ຕາມພາລະບົດບາດຂອງຕົນ; ເຂົ້າຮ່ວມສະເຫຼີມສະຫຼອງວັນສຳຄັນຕ່າງໆ ຂອງບັນດາປະເທດເພື່ອນມິດຍຸດທະສາດ.

2) ສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືກັບຕ່າງປະເທດ ໂດຍສະເພາະກັບປະເທດເພື່ອນມິດຍຸດທະສາດໃຫ້ຫຼາຍກວ່າເກົ່າ, ຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອທາງດ້ານຕ່າງໆ ທີ່ຈຳເປັນ ພ້ອມທັງສ້າງເງື່ອນໄຂໄປແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ ກັບ ຕ່າງປະເທດ ແລະ ບັນດາແຂວງພາຍໃນປະເທດໃຫ້ຫຼາຍຂຶ້ນ;

3) ບຳລຸງຍົກລະດັບດ້ານພາສາຕ່າງປະເທດ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານເສນາທິການ ເພື່ອຄວາມສະດວກ ແລະ ຍົກສູງປະສິດທິຜົນໃນການເຄື່ອນໄຫວວຽກງານຕ່າງປະເທດ.

**ມາດຕາ 2 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ພະແນກການ, ອົງການ, ກົມກອງ ທີ່ກ່ຽວຂ້ອງຂອງແຂວງ, ເມືອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ



สแกนด้วย CamScanner